ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 3: Fairy Tales

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 2:** ເທບນິຍາຍ
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

ເວລາ: 90 ນາທີ

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ຄວາມໝາຍ ແລະ ຈຸດພິເສດຂອງເທບນິຍາຍ<br>- ການກຳເນີດ ແລະ ການຂະຫຍາຍຕົວຂອງເທບນິຍາຍ</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ຄວາມໝາຍຂອງເທບນິຍາຍ<br>- ຈຸດພິເສດຂອງເທບນິຍາຍ<br>- ການກຳເນີດຂອງເທບນິຍາຍ<br>- ການຂະຫຍາຍຕົວຂອງເທບນິຍາຍ</td><td>ຄຳຖາມຫຼັກ (Questions):<br>1) ເທບນິຍາຍແມ່ນຫຍັງ?<br>2) ເທບນິຍາຍມີຈຸດພິເສດແນວໃດ?<br>3) ເທບນິຍາຍກຳເນີດມາຈາກໃສ?<br>4) ເທບນິຍາຍຂະຫຍາຍຕົວແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>-ໃຫ້ນັກຮຽນຮູ້ໄດ້ເຖິງຄວາມໝາຍ, ຈຸດພິເສດ, ການກຳເນີດ ແລະການຂະຫຍາຍຕົວຂອງເທບນິຍາຍຂອງລາວ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງ ຄວາມໝາຍ, ຈຸດພິເສດ, ການກຳເນີດ ແລະການຂະຫຍາຍຕົວຂອງເທບນິຍາຍຂອງລາວ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
</table>

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)**

- **ສື່ການສອນມີ:**

  ປຶ້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ.

- **ກິດຈະກຳການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**

  - ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງເນື້ອໃນ ແລະການຈັດແບ່ງປະເພດຂອງວັນນະຄະດີພື້ນເມືອງລາວ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

## ບົດທີ 2
## ເທບນິຍາຍ

**1. ຄວາມໝາຍ ແລະ ຈຸດພິເສດຂອງເທບນິຍາຍ**

**1.1 ຄວາມໝາຍຂອງເທບນິຍາຍ** ( 20 ນາທີ)

**<u>ກິດຈະກຳ 1:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

  1) ເທບນິຍາຍແມ່ນຫຍັງ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (15 ນາທີ)

ເທບນິຍາຍແມ່ນເລື່ອງເລົ່າພື້ນເມືອງທີ່ພັນລະນາ ຫຼື ເລົ່າເຖິງການປະພຶດ, ການເຄື່ອນໄຫວຂອງ ຕົວລະຄອນແຖນ, ອິນ, ພົມ ແລະ ຜີສາງ ຕາມແນວຄິດຂອງຄົນບູຮານ. ເວົ້າອີກຢ່າງໜຶ່ງວ່າ: ຄຳວ່າ "ນິຍາຍ" ມີຄວາມໝາຍວ່າ "ນິທານ" ເລື່ອງທີ່ເວົ້າສືບຕໍ່ກັນມາເມື່ອເຕົ້າໂຮມກັນເປັນເທບນິຍາຍເຊິ່ງມີຄວາມໝາຍວ່າ: ຕຳນານ ເລື່ອງລາວທີ່ເວົ້າກ່ຽວກັບເທບ ແລະ ເທວະດາ. ເທບນິຍາຍ ມີຄວາມໝາຍອັນໃຫຍ່ຫຼວງທາງດ້ານປະຫວັດສາດ ແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດ, ການພົວພັນລະຫວ່າງມະນຸດກັບທຳມະຊາດ, ແມ່ນເລື່ອງທີ່ສ່ອງແສງເຖິງຫົວຄິດປະດິດສ້າງ, ນ້ຳໃຈອັນອົງອາດກ້າຫານຂອງຊາວບູຮານ ໃນການຕໍ່ສູ້ຕ້ານໄພທຳມະຊາດ ແລະ ດັດແປງທຳມະຊາດເພື່ອມາຮັບໃຊ້ການດຳລົງຊີວິດຕາມສະພາບຕົວຈິງຂອງເຂົາເຈົ້າ.

ເທບນິຍາຍ ແມ່ນໝາກຜົນແຫ່ງການປະດິດສ້າງວັດທະນະທຳທາງຈິດໃຈຂອງຄົນຢູ່ໃນລະບອບປະຖົມມະຊົບ(ສັງຄົມບໍ່ມີຊົນຊັ້ນ). ສະນັ້ນ, ຈຶ່ງອາດເວົ້າໄດ້ວ່າໃນພື້ນຖານວັດທະນະທຳຂອງແຕ່ລະຊາດ, ເທບນິຍາຍແມ່ນຮູບການປະດິດແຕ່ງພື້ນເມືອງທີ່ເກີດຂຶ້ນກ່ອນໝູ່. ມັນຕິດພັນກັບວຽກງານເຄື່ອນໄຫວຕົວຈິງ, ການດຳລົງຊີວິດ, ການເຊື່ອຖືຮີດຄອງປະເພນີ ແລະ ຄວາມມຸ່ງມາດປາຖະໜາຂອງຄົນເຮົາ.

ເທບນິຍາຍບໍ່ສະເພາະແຕ່ເປັນວິທີອະທິບາຍໂລກຂອງຊາວບູຮານເທົ່ານັ້ນ, ຫາກຍັງແມ່ນການຢືນຢັນ ແລະ ສັນລະເສີນໝາກຜົນຂອງການປະດິດສ້າງວັດທະນະທຳ ແລະ ປະກອບສ່ວນສາຍສຳພັນ ທາງສັງຄົມ, ເພີ່ມຄວາມຮູ້ບົດຮຽນໃນດ້ານທຳມະຊາດ, ຖະນຸຖະໜອມມູນເຊື້ອດ້ານວັດທະນະທຳ, ຄຸນສົມບັດ ແລະ ຈິດສະຫງວນຄວາມງາມໃນໝູ່ປະຊາຊົນອີກດ້ວຍ (ພູວົງ ໝໍ່ດາລາ ແລະຄະນະ, 2018).

ເທບນິຍາຍ ຍັງແມ່ນໝາກຜົນແຫ່ງການປະດິດສ້າງວັທະນະທຳທາງດ້ານຈິດໃຈຂອງຄົນທີ່ຢູ່ໃນລະບອບສັງຄົມທີ່ບໍ່ມີຊົນຊັ້ນ, ໃນພື້ນຖານວັດທະນະທຳຂອງແຕ່ລະຊາດ, ເທບນິຍາຍແມ່ນຮູບການປະດິດແຕ່ງພື້ນເມືອງທີ່ເກີດກ່ອນໝູ່, ມັນຕິດພັນກັບການເຄື່ອນໄຫວວຽກງານຕົວຈິງ, ການດຳລົງຊີວິດ, ການເຊື່ອຖືຮີດຄອງປະເພນີ ຄວາມມຸ່ງມາດປາດຖະໜາຂອງຄົນໃນຖານະເປັນຮູບຖານສະຕິສັງຄົມໜຶ່ງ. ເທບນິຍາຍຍັງມີບົດບາດສຳຄັນໃນການເຄື່ອນໄຫວວຽກງານວັດທະນະທຳທາງຈິດໃຈອີກດ້ວຍ. ສຳລັບຊາວບູຮານແລ້ວ ເຂົາເຈົ້າໄດ້ຝັງແນວຄິດຈິດໃຈທັງໝົດໄວ້ກັບເທບນິຍາຍວ່າເປັນເລື່ອງທີ່ສັກສິດສູງສົ່ງ (ກຽງແກ້ວ ນວນນະວົງ ແລະຄະນະ, 2001).

ເວົ້າລວມແລ້ວ ເທບນິຍາຍມີຄວາມໝາຍອັນໃຫຍ່ຫຼວງທາງດ້ານປະຫວັດສາດແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດ. ຍ້ອນວ່າເທບນິຍາຍແຕ່ລະເລື່ອງມີເນື້ອໃນສ່ອງແສງເຖິງຫົວຄິດປະດິດສ້າງ, ນ້ຳໃຈອົງອາດກ້າຫານຂອງຊາວບູຮານໃນການຕໍ່ສູ້ຕ້ານໄພທຳມະຊາດ. ພວກເຂົາມີຄວາມມຸ່ງມາດປາດຖະໜາຢາກເປັນເຈົ້າຍຶດຄອງທຳມະຊາດເພື່ອມາຮັບໃຊ້ຊີວິດຂອງຕົນເອງ (ອ່ອນແກ້ວ ນວນນະວົງ ແລະຄະນະ, 2008).

**1.2 ຈຸດພິເສດຂອງເທບນິຍາຍ** (10 ນາທີ)

**<u>ກິດຈະກຳ 2:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ເທບນິຍາຍມີຈຸດພິເສດແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (5 ນາທີ)

ໃນການຄົ້ນຄວ້າຊອກຮູ້ເທບນິຍາຍຂອງແຕ່ລະຊາດທີ່ຜ່ານມາ ເຄີຍມີທັດສະນະຫຼາຍຢ່າງແຕກຕ່າງກັນກ່ຽວກັບບັນຫາຫານກຳເນີ ແລະຂະຫຍາຍຕົວຂອງເທບນິຍາຍ, ກ່ຽວກັບຄວາມໝາຍ ແລະບັນຫາຕົ້ນຕໍຂອງເທດນິຍາຍ ແລະອື່ນໆ. ຊາວບູຮານໄດ້ອະທິບາຍວ່າ: ທຸກສິ່ງທຸກຢ່າງ ທຳອິດແມ່ນເກີດມາຈາກການເສກສັນປັ້ນແຕ່ງດ້ວຍລິດເດດຂອງອິນ, ພົມ ແລະແຖນທັງຫຼາຍ, ແຕ່ເທບນິຍາຍພັດບໍ່ແມ່ນເກີດມາຈາກສາສະໜາ ແລະຄວາມເຊື່ອຖືຂອງຄົນເຮົາຄືພວກທີ່ເດີນຕາມລັດທິຈິດນິຍົມທີ່ເວົ້າມາ.

ໃນໄລຍະຕົ້ນແມ່ນມີການຂະຫຍາຍຕົວຢ່າງອຸດົມສົມບູນ ແຕ່ພື້ນຖານແມ່ນຮັກສາໄດ້ລັກສະນະເດີມດາເກົ່າແກ່ຂອງລະບອບສັງຄົມປະຖົມບູຮານ. ພ້ອມນັ້ນ ກໍມີການຂະຫຍາຍຕົວຢ່າງເປັນລະບົບ ເຊັ່ນ ເທບນິຍາຍເລື່ອງ "ໝາກນ້ຳເຕົ້າປຸ້ງ", "ປູ່ເຍີ ຍ່າເຍີ" ມັນຄົງຕົວ ແລະຂະຫຍາຍຕົວດ້ວຍຮູບການກາບກອນ ຊຶ່ງປັດຈຸບັນຍັງມີການພົວພັນກັບຄຳໂອມ ຊຶ່ງເປັນຄຳໄຫວ້ວອນບູຊາແຖນ, ອິນພົມ. ມາຮອດປັດຈຸບັນບໍ່ຄົບຖ້ວນ, ຂາບັ້ນຂາດຕອນ; ອເທບນິຍາຍພັດມີການແຊກຊຶມປົນເປກັບປະເພດພື້ນຕຳນານ ແລະບົດເລື່ອງເກີດຂຶ້ນໃໝ່ປົນເປກັບເລື່ອງ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ປະຫວັດສາດເຊັ່ນ ເລື່ອງ "ຂຸນບູລົມ" ເຮັດໃຫ້ເລື່ອງເຫຼົ່ານັ້ນມີລັກສະນະພື້ນຕຳນານ ແລະລັກສະນະເທບນິຍາຍ (ກຽງແກ້ວ ນອນນະວົງ ແລະຄະນະ, 2001).

ມາຮອດສະໄໝສັງຄົມມີຊົນຊັ້ນ, ເທບນິຍາຍໄດ້ຖືກບິດເບືອນ ແລະສວຍໃຊ້ໄປຕາມທັດສະນະຂອງຊົນຊັ້ນປົກຄອງ ແລະພວກທີ່ເຜີຍແຜ່ສາສະໜາ. ດັ່ງນັ້ນ, ຈິ່ງເຮັດໃຫ້ເທບນິຍາຍເກີດມີລັກສະນະຊົນຊັ້ນ ແລະເຫຼືອເຊື່ອງົມງວາຍ. ແຕ່ເບິ່ງເລິກໄປແລ້ວເທບນິຍາຍເກີດມາການດຳລົງຊີວິດ, ການອອກແຮງງານ ແລະການຕໍ່ສູ້ຂອງຄົນເຮົາ, ສະນັ້ນເຖິງຈະມີລັກສະນະເຫຼືອເຊື່ອ ແລະມະຫັດສະຈັນແຕ່ກໍມີຄຸນຄ່າສັດຈະທັດຢ່າງເລິກເຊິ່ງ.

ຈຸດພິເສດອັນສຳຄັນອີກອັນໜຶ່ງຂອງເທບນິຍາຍລາວແມ່ນລະບົບຜີ, ແຖນທີ່ເປັນຕົວລະຄອນສຳຄັນປະຈຳຂອງທຸກໆເລື່ອງ. ຄົນລາວສະໄໝກ່ອນເຄີຍຄິດ ແລະເຊື່ອວ່ານອກຈາກໂລກມະນຸດເຮົາແລ້ວຍັງມີໂລກຂອງຜີ ແລະແຖນອີກ. ນອກຈາກເມືອງລຸ່ມຍັງມີເມືອງຟ້າເມືອງແຖນ "ແຖນຢູ່ເມືອງບົນຄົນຢູ່ເມືອງລຸ່ມ". ຄົນ ແລະຜີມີການໄປມາຫາສູ່ ແລະພົວພັນເຊິ່ງກັນ ແລະກັນຢູ່ສະເໝີ. ຄວາມຄິດແບບນີ້ບໍ່ສະເພາະແຕ່ສະແດງອອກໃນເທບນິຍາຍເທົ່ານັ້ນ, ຫາກຍັງມີຮ່ອງຮອຍຕິດພັນກັບຮີດຄອງປະເພນີ ແລະການເຊື່ອຖືຂອງປະຊາຊົນເຜົ່າຕ່າງໆມາແຕ່ດົນນານອີກດ້ວຍ (ກຽງແກ້ວ ນອນນະວົງ ແລະຄະນະ, 2002).

## 2. ການກຳເນີດ ແລະການຂະຫຍາຍຕົວຂອງເທບນິຍາຍ.

### 2.1 ການກຳເນີດຂອງເທບນິຍາຍ (20 ນາທີ)

**<u>ກິດຈະກຳ 3:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ເທບນິຍາຍກຳເນີດມາຈາກໃສ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

ເທບນິຍາຍກຳເນີດແນວໃດ? ຂະຫຍາຍຕົວແນວໃດ? ມີຄວາມໝາຍແນວໃດ? ນີ້ແມ່ນບັນຫາໃຈກາງຂອງການຄົ້ນຄວ້າ ແລະຊອກຮູ້ກ່ຽວກັບເທບນິຍາຍຂອງແຕ່ລະຊາດ ກໍລ້ວນແຕ່ເອກະພາບກັນວ່າ ທຸກສິ່ງທຸກຢ່າງລ້ວນແຕ່ເກີດມາຈາກການເສກສັນປັ້ນແຕ່ງອັນມີລິດເດດຂອງພະອິນພະພົມ ແລະແຖນທັງຫຼາຍ; ແຕ່ບໍ່ເກີດມາຈາກສາສະໜາ ແລະການເຊື່ອຖືໃດໆເພາະຮູບການປະດິດແຕ່ງແມ່ນກຳເນີດກ່ອນທຸກໆການເຊື່ອຖື. ສະນັ້ນ, ຈິ່ງສະຫຼຸບໄດ້ວ່າມັນກຳເນີດຈາກ:

- ການອອກແຮງງານ
- ຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ
- ການຕໍ່ສູ້ຕ້ານໄພທຳມະຊາດ

ໃນຕົວຈິງບັນດາເຫດການ ແລະປາກົດການທຳມະຊາດທີ່ເຄີຍມີຜົນສະທ້ອນໂດຍກົງ ເຖິງການເພີ່ມພູນຜະລິດຜົນ ແລະການດຳລົງຊີວິດຂອງຊາວບູຮານ ເຊັ່ນ ເກີດມີໄພແຫ້ງແລ້ງ, ອາກາດໜາວເຢັນ, ຟ້າຮ້ອງດ ນໍ້ານອງ... ສະນັ້ນ, ເຂົາຈິ່ງສົນໃຈ ແລະຫາວິທີອະທິບາຍເຄົ້າກຳເນີດຂອງໂລກຈັກກວານເຊັ່ນ ດິນຟ້າອາກາດ, ເດືອນ, ດາວ, ຕາເວັນ, ເຄົ້າກຳເນີດຂອງມະນຸດ, ການເກີດ, ການຕາຍ ສິ່ງເຫຼົ່ານັ້ນເປັນສິ່ງເລິກລັບຂອງຊາວບູຮານ (ກຽງແກ້ວ ນອນນະວົງ ແລະຄະນະ, 2001).

ທັດສະນະວິທະຍາສາດມາກສິດໄດ້ະພິສູດໃຫ້ເຫັນຢ່າງຄ່ອງແຄ້ວທີ່ສຸດວ່າ: ປະຫວັດສາດແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດ ແມ່ນປະຫວັດສາດແຫ່ງການອອກແຮງງານຢ່າງມີສະຕິ ແລະປະດິດສ້າງຂອງຄົນເຮົາ, ແມ່ນປະຫວັດສາດແຫ່ງການຕໍ່ສູ້ຕ້ານໄພທຳມະຊາດ ແລະຕໍ່ສູ້ດ້ານສັງຄົມເປັນເວລາຫຼາຍພັນປີມາແລ້ວ. ເທບນິຍາຍເຊິ່ງແມ່ນພາກສ່ວນໜຶ່ງຂອງວັດທະນະທຳບູຮານກໍໄດ້ກຳເນີດເກີດຂຶ້ນບົນພື້ນຖານການອອກແຮງງານ, ການດຳລົງຊີວິດແບບລວມໝູ່ ແລະການຕໍ່ສູ້ຂອງຄົນສະໄໝກ່ອນ.

ຊາວບູຮານຢາກອອກແຮງງານ ແລະຕໍ່ສູ້ຕ້ານໄພທຳມະຊາດໃຫ້ໄດ້ຮັບຜົນດີຈຳເປັນທີ່ສຸດຕ້ອງຊອກຮູ້, ສັງເກດ ແລະອະທິບາຍກ່ຽວກັບເຫດການ, ປາກົດການຂອງທຳມະຊາດເຊັ່ນ: ຝົນຕົກ, ນ້ຳນອງ, ຟ້າຜ່າ, ໄພແຫ້ງແລ້ງ , ພູຜາ, ແມ່ນ້ຳລາເຊ ແລະສັດສາວາສິ່ງຕ່າງໆ. ຊາວບູຮານຍັງໄດ້ສົນໃຈ ແລະຫາວິທີອະທິບາຍກ່ຽວກັບບັນຫາທີ່ໃຫຍ່ກວ່ານີ້ອີກຄື: ກົກເຄົ້າການກຳເນີດຂອງໂລກຈັກກະວານ, ກົກເຄົ້າການກຳເນີດຂອງມະນຸດ, ຂອງຊາດ, ການເກີດການຕາຍຂອງຄົນເຮົາ ແລະອື່ນໆ. ສິ່ງເຫຼົ່ານີ້ລ້ວນແຕ່ແມ່ນສິ່ງເລິກລັບທີ່ສຸດສຳລັບຊາວບູຮານ. ຄວາມຮັບຮູ້ ແລະການອະທິບາຍຂອງຊາວບູຮານຕໍ່ບັນຫາດັ່ງກ່າວມານັ້ນມີອັນຖືກຕ້ອງຊັດເຈນດີສົມຄວນ, ແຕ່ຄວາມຜິດພາດກໍມີຫຼາຍ, ຍ້ອນເຕັກນິກການຜະລິດຜົນຍັງຕໍ່າ ແລະຫຼ້າຫຼັງ, ຄວາມຮັບຮູ້ກ່ຽວກັບໂລກພາວະວິໄສຖືກຈຳກັດຈຸດ, ແຕ່ຄວາມຮຽກຮ້ອງຕ້ອງການໃນການຊອກຮູ້, ອະທິບາຍກ່ຽວກັບເຫດການເຫຼົ່ານັ້ນພັດນັບມື້ນັບເພີ່ມຂຶ້ນ. ປາກົດການທຳມະຊາດທີ່ພໍຮູ້ ແລະອະທິບາຍໄດ້ນັ້ນຍັງຫຼາຍຢູ່, ອັນພາໃຫ້ຄົນບູຮານເກີດມີແນວຄິດຢ້ານກົວຈົນຍົນຍອມນົບໄຫວ້ ແລະເຊື່ອຖືມັນເປັນສິ່ງສັກສິດ.

ໃນສະໄໝບູຮານມີການສູ້ຮົບຕົບຕີກັນລະຫວ່າງກຸ່ມຄົນນີ້ກັບກຸ່ມຄົນອື່ນ, ລະຫວ່າງຈຸ້ມເຈື້ອເຊື້ອສາຍນີ້ກັບຈຸ້ມເຈື້ອເຊື້ອສາຍອື່ນ. ໃນຈຳນວນເທບນິຍາຍຂອງລາວທີ່ເລົ່າກ່ຽວກັບຊີວິດ ແລະຜົນງານອັນດີເດັ່ນຂອງບັນດາບັນພະບູລຸດໃນຂະບວນການຕໍ່ສູ້ນັ້ນ, ບົດເລື່ອງເລົ່ານັ້ນໄດ້ຮັບການເລົ່າສືບຕໍ່ກັນມາບໍ່ສະເພາະແຕ່ຖືກກັບຄວາມເປັນຈິງເທົ່ານັ້ນດ ແຕ່ຫາກຍັງມີການເສກສັນປັ້ນແຕ່ງ ແລະເວົ້າໂຍກໃສ່ຕາມຄວາມເຂົ້າໃຈຂອງຜູ້ເລົ່າເຮັດໃຫ້ເລື່ອງທີ່ມີຈິງກາຍເປັນເລື່ອງທີ່ມີລັກສະນະເຫຼືອເຊື່ອ, ມະຫັດສະຈັນ, ບັນດາບັນພະບູລຸດເຫຼົ່ານັ້ນໄດ້ຮັບການເຊື່ອຖືຮັກແພງ ແລະຍົກຍ້ອງເທົ່າທຽມກັບຕົວລະຄອນແຖນຕາມຄວາມຄິດ ແລະຄວາມເຊື່ອຖືຂອງຄົນສະໄໝກ່ອນດັ່ງທີ່ສະແດງອອກໃຫ້ເຫັນໃນລະບົບເທບນິຍາຍປູ່ເຍີ ຍ່າເຍີຂອງລາວເຮົາເປັນຕົ້ນ.

ເທບນິຍາຍຊາດຕ່າງໆມີລະດັບການຂະຫຍາຍຕົວແຕກຕ່າງກັນ, ເທບນິຍາຍຂອງລາວອຸດົມສົມບູນ ແລະ ໃນດ້ານພື້ນຖານຍັງຮັກສາລັກສະນະເດີມ, ເກົ່າແກ່ ແລະ ເປັນລະບົບສາຍໃຍສົມຄວນເຊັ່ນ: ລະບົບເທບນິຍາຍ ໝາກນ້ຳເຕົ້າປຸງ, ລະບົບເທບນິຍາຍປູ່ເຍີຍ່າເຍີ ແລະ ອື່ນໆ. ລະບົບເທບນິຍາຍເຫຼົ່ານີ້ເບື້ອງຕົ້ນອາດເປັນບົດເລື່ອງທີ່ເລົ່າສູ່ກັນຟັງພາຍໃຕ້ຈຸ້ມເຊື້ອສາຍໃຜລາວເທົ່ານັ້ນເຊັ່ນ: ເທບນິຍາຍປູ່ເຍີຍ່າເຍີອາດຈະແມ່ນບົດເລື່ອງເລົ່າກ່ຽວກັບບັນພະບູລຸດຜູ້ທີ່ເກັ່ງກ້າ ແລະ ມີຄວາມດີຫຼາຍສຳລັບເຜົ່າລາວໃນຄ່າວກ່ອນ. ມາຮອດສະໄໝຂຸນບູລົມໄດ້ມີການສ່ອງແສງເຖິງຮ່ອງຮອຍໃນການກະກຽມກໍ່ຕັ້ງເມືອງບູຮານທີ່ຊຽງດົງຊຽງທອງ. ໃນການກໍ່ຕັ້ງເມືອງບູຮານນັ້ນແນ່ນອນຕ້ອງມີການເຕົ້າໂຮມ ແລະ ປະກອບສ່ວນຂອງຫຼາຍກຸ່ມຄົນຕ່າງກັນທີ່ດຳລົງຊີວິດໃນຂົງເຂດດຽວກັນອັນພາໃຫ້ເທບນິຍາຍຂອງແຕ່ລະຈຸ້ມເຊື້ອສາຍຂອງເຫຼົ່ານີ້ມີການດຶງດູດເປັນລະບົບເພື່ອສ່ອງແສງເຖິງການກຳເນີດເມືອງບູຮານໃນສະໄໝຕົ້ນຂອງຊາດເຮົາ ແລະ ເທບນິຍາຍລາວຍັງມີການພົວພັນສະນິດແໜ້ນກັບການປະດິດແຕ່ງພື້ນເມືອງປະເພດຄຳກອນໃນສະໄໝບູຮານເຊັ່ນ: ຄຳໂອມ, ຄຳໂສກ ແລະ ຄຳໄຫວ້ວອນອີກດ້ວຍ.

ເວົ້າລວມແລ້ວເທບນິຍາຍເກີດມາຈາກການດຳລົງຊີວິດ, ການອອກແຮງງານ ແລະ ການຕໍ່ສູ້ຂອງ ຄົນເຮົາ. ສະນັ້ນ, ເຖິງຈະມີລັກສະນະເຫຼືອເຊື່ອ ແລະ ມະຫັດສະຈັນແຕ່ກໍ່ມີຄຸນຄ່າສັດຈະທັດຢ່າງເລິກເຊິ່ງ (ບໍ່ແສງຄຳ ວົງດາລາ ແລະຄະນະ, 1987).

**2.2 ການຂະຫຍາຍຕົວຂອງເທບນິຍາຍ** (10 ນາທີ)

**<u>ກິດຈະກຳ 4:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ເທບນິຍາຍຂະຫຍາຍຕົວແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (5 ນາທີ)

ເຖິງແມ່ນວ່າແຕ່ກ່ອນເທບນິຍາຍຂອງລາວເຮົາອຸດົມສົມບູນເປັນລະບົບ ແລະ ຂະຫຍາຍຕົວໄດ້ດີດັ່ງໄດ້ເວົ້າມາແລ້ວກໍຕາມ. ແຕ່ຍ້ອນຂາດຄວາມເອົາໃຈໃສ່ເກັບກຳ ແລະ ທ້ອນໂຮມບັນດາບົດເທບນິຍາຍ ເຫຼົ່ານັ້ນໄວ້. ສະນັ້ນ, ຈຶ່ງມີການຕົກເຮ່ຍເສຍຫາຍໄປຫຼາຍທີ່ສຸດ, ລະບົບເທບນິຍາຍນ້ຳເຕົ້າປຸງ, ເທບນິຍາຍປູ່ເຍີຍ່າເຍີເຊິ່ງໄດ້ຈົດກ່າຍຖ່າຍທອດໄວ້ໃນປຶ້ມໜັງສືພົງສາວະດານລາວໃນຕຳນານຫຼວງພະບາງ, ໃນໜັງສືນິທານຂຸນບູລົມ...ເຫຼົ່ານີ້ບໍ່ເປັນລະບົບຄົບຖ້ວນຄືດັ່ງສະໄໝເທບນິຍາຍພວມຂະຫຍາຍຕົວຢູ່ນັ້ນ. ຊ້ຳບໍ່ໜຳຍັງມີການສັບປົນຄົນເລລະຫວ່າງບົດເລື່ອງທີ່ຈົດກ່າຍໄວ້ນັ້ນອີກດ້ວຍ. ນອກຈາກນັ້ນ, ໃນສະໄໝລາວເລີ່ມມີຮ່ອງຮອຍໃນການກະກຽມກໍ່ຕັ້ງເມືອງບູຮານ, ເທບນິຍາຍຂອງລາວເຮົາພັດມີການແຊກຊ້ອນປົນເປກັນກັບພື້ນສືບທີ່ຫາກໍເກີດຂຶ້ນ ເພື່ອສ່ອງແສງເຖິງບັນຫາເຫດການປະຫວັດສາດໃນເວລານັ້ນເຊັ່ນ: ພື້ນຂຸນບູລົມ ທັງມີລັກສະນະເທບນິຍາຍ, ທັງມີລັກສະນະພື້ນສືບ, ຍິ່ງໄປກວ່ານັ້ນນັກຄົ້ນຄວ້າບາງຄົນຍັງຖືວ່າພື້ນຂຸນບູລົມເປັນເລື່ອງທີ່ມີຈິງໃນປະຫວັດສາດ.

ມາຮອດສະໄໝສັງຄົມມີຊົນຊັ້ນ, ໂດຍສະເພາະແມ່ນລະບອບສັງຄົມສັກດີນາທີ່ສວຍໃຊ້ສາສະໜາ ເປັນເຄື່ອງມືຮັບໃຊ້ສິດຜົນປະໂຫຍດກົດຂີ່ຂູດຮີດຂອງເຂົານັ້ນ, ເທບນິຍຍຂອງລາວເຮົາມີການປ່ຽນແປງຫຼາຍ ຢ່າງ. ເນື້ອໃນຄວາມໝາຍບົດເລື່ອງບາງເທື່ອກໍມີການຜັນແປໄປຕາມທັດສະນະຂອງຊົນຊັ້ນປົກຄອງ ແລະ ທັດສະນະສາສະໜາພຸດ. ຈຸດປະສົງຂອງການຈົດກ່າຍຖ່າຍທອດເອົາບາງບົດເທບນິຍາຍຜ່ານມານັ້ນກໍ່ເພື່ອອະທິບາຍປະຫວັດສາດຂອງຊາດເຮົາຕາມທັດສະນະຂອງຊົນຊັ້ນສັກດີນາຜູ້ປົກຄອງ ແລະ ສ້າງພື້ນຖານອັນສົມເຫດສົມຜົນໃຫ້ແກ່ການເຊື່ອຖືແບບງົມງວາຍ ແລະ ຮີດຄອງປະເພນີຕ່າງໆທີ່ສອດຄ່ອງກັບສິດຜົນປະໂຫຍດຂອງພວກສັກດີນາເອງ (ບໍ່ແສງຄຳ ວົງດາລາ ແລະຄະນະ, 1987).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
  - ຄວາມໝາຍຂອງວັນນະຄະດີພື້ນເມືອງລາວ
  - ຄວາມສຳຄັນຂອງວັນນະຄະດີພື້ນເມືອງລາວ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

- ການກຳເນີດຂອງວັນນະຄະດີພື້ນເມືອງລາວ
- ການຂະຫຍາຍຕົວຂອງວັນນະຄະດີພື້ນເມືອງລາວ

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ
- **ຂັ້ນຕັກເຕືອນ**
  - ຄູແນະນຳນັກຮຽນອ່ານບົດຮຽນໃໝ່
  - ສຶກສາແນວຄິດຂອງຜູ້ຮຽນ
  - ມອບວຽກບ້ານ

**ເອກະສານອ້າງອີງ**

ກຽງແກ້ວ ນວນນະວົງ ແລະຄະນະ. (2001). ວັນນະຄະດີລາວ. ລະຫັດ 630LI 222. ວິທະຍາໄລ ວິທະຍາສາດພື້ນຖານ. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ

ອ່ອນແກ້ວ ນວນນະວົງ ແລະຄະນະ. (2008). ແບບຮຽນວັນນະຄະດີຊັ້ນມັດທະຍົມສຶກສາ ປີທີ ສີ່. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ກຽງແກ້ວ ນວນນະວົງ ແລະຄະນະ. (2002). ວັນນະຄະດີພື້ນເມືອງ 1. ລະຫັດ 630LLI 322. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ

ບໍ່ແສງຄຳ ວົງດາລາ ແລະຄະນະ. (1987). ວັນນະຄະດີລາວ. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ.

ພູວົງ ໝໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈຳວິຊາ



ປທ.ສົມທະເພີຍ ສີວົງສັກ